ຄຳຖາມກ່ຽວກັບສະພາບດິນຟ້າອາກາດ

ອາຊີຕາເວັນອອກສ່ຽງໃຕ້



ກະຕິກາການຫຼິ້ນກິດຈະກຳຖາມຕອບ

ກິດຈະກຳຖາມຕອບ ກ່ຽວກັບ ສະພາບດິນຟ້າອາກາດ ແມ່ນເກມທີ່ຫຼິ້ນງ່າຍ ຊຶ່ງຈະປະກອບດ້ວຍຊຸດຄຳຖາມ ທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ. ຊຸດຄຳຖາມນີ້ ແມ່ນໄດ້ເສີມໃສ່ປຶ້ມແບບຮຽນ ພາຍໃຕ້ ໂຄງການສຶກສາສ້າງຈິດສຳນຶກ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ເພື່ອສົ່ງເສີມເປົ້າໝາຍການພັດທະນາແບບຍືນຍົງ (Climate Box) ແລະ ເຮັດໃຫ້ນັກຮຽນສາມາດຮຽນຮູ້ ກ່ຽວກັບ ບັນຫາການປ່ຽນແປງດິນຟ້າອາກາດ ໄດ້ງ່າຍ ແລະ ມ່ວນຂຶ້ນ.


ແຕ່ລະບັດຄຳຖາມ ທັງໝົດ 100 ບັດ ຈະປະກອບດ້ວຍໜຶ່ງຄຳຖາມ ແລະ ຄຳຕອບ 4 ຂໍ້, ແຕ່ຈະມີພຽງໜຶ່ງຂໍ້ເທົ່ານັ້ນ ທີ່ຖືກຕ້ອງ. ຜູ້ຫຼິ້ນຈະໄດ້ຮັບ 1 ຄະແນນ ສຳລັບຂໍ້ທີ່ຕອບຖືກ. ຜູ້ທີ່ໄດ້ຄະແນນຫຼາຍທີ່ສຸດ ຈະເປັນຜູ້ທີ່ຊະນະການແຂ່ງຂັນ.

ຊຸດຄຳຖາມ ແມ່ນໄດ້ແບ່ງອອກເປັນທັງໝົດ 3 ຫົວຂໍ້, ທີ່ສອດຄ່ອງກັບປຶ້ມແບບຮຽນ ພາຍໃຕ້ໂຄງການ Climate Box ທັງສາມພາກ:

1. ບັນຫາການປ່ຽນແປງດິນຟ້າອາກາດ
2. ການປ່ຽນແປງດິນຟ້າອາກາດ ສົ່ງຜົນກະທົບຕໍ່ທຳມະຊາດ ແລະ ມະນຸດ ຄືແນວໃດ. ພວກເຮົາສາມາດປັບຕົວເຂົ້າກັບຜົນກະທົບທີ່ເກີດຈາກການປ່ຽນແປງດິນຟ້າອາກາດ ທີ່ບໍ່ອາດສາມາດຫຼີກລ່ຽງໄດ້ບໍ?
3. ວິທີປ້ອງກັນການປ່ຽນແປງດິນຟ້າອາກາດທີ່ເປັນອັນຕະລາຍ

ຜູ້ທີ່ເຮັດໜ້າທີ່ເປັນຄົນຖາມ ສາມາດເບິ່ງຄຳຕອບທີ່ຖືກຕ້ອງ ຢູ່ ບັດທີ່ແຍກອອກຕ່າງຫາກ ຊຶ່ງໃສ່ຫົວຂໍ້ວ່າ “ຄຳຕອບ”.

ບັນຫາການປ່ຽນແປງ ດິນຟ້າອາກາດ



1	ນັບຕັ້ງແຕ່ກາງສະຕະວັດທີ 19 ເປັນຕົ້ນມາ, ອຸນຫະພູມເທິງໜ້າໂລກ ແມ່ນ:
A	ບໍ່ມີການປ່ຽນແປງ
B	ຫຼຸດລົງ
C	ເພີ່ມຂຶ້ນ
D	ເພີ່ມຂຶ້ນຢ່າງໄວວາ ແລ້ວຫຼຸດລົງ

2 ນັບຕັ້ງແຕ່ກາງສະຕະວັດທີ 19 ເປັນຕົ້ນມາ, ອຸນຫະພູມເທິງໜ້າໂລກ ໄດ້ມີການເພີ່ມຂຶ້ນເທົ່າໃດ?

A 1.2 ອົງສາ (°C)

B 2 ອົງສາ (°C)

C 5 ອົງສາ (°C)

D 10 ອົງສາ (°C)

3	ຊັ້ນອາກາດ ທີ່ເຮັດໜ້າທີ່ຫຸ້ມຫໍ່ໜ່ວຍໂລກ ເອີ້ນວ່າ:
A	ສ່ວນທີ່ຫຸ້ມຫໍ່ເປືອກໂລກທີ່ເປັນນ້ຳທັງໝົດ (hydrosphere)
B	ຊັ້ນຫີນແຂງ ທີ່ຢູ່ສ່ວນນອກສຸດຂອງໂລກ (lithosphere)
C	ຊັ້ນບັນຍາກາດ (atmosphere)
D	ບໍລິເວນທີ່ປົກຫຸ້ມດ້ວຍນ້ຳແຂງ (cryosphere)

4 ສະພາບອາກາດ ໝາຍເຖິງ:

A	ຮູບແບບສະພາບອາກາດ ຢູ່ໃນພື້ນທີ່ໃດໜຶ່ງ ໃນຊ່ວງໄລຍະເວລາຫຼາຍປີ
B	ລັກສະນະສະເພາະຂອງສະພາບອາກາດ ທີ່ບົ່ງບອກຄວາມຖີ່ຂອງປະລິມານນ້ຳຝົນ
C	ສະພາບອາກາດ ໃນຊ່ວງໄລຍະເວລາ 1 ອາທິດ
D	ສິ່ງທີ່ຄົນຮຸ່ນເກົ່າຍັງຈື່ໄດ້ ກ່ຽວກັບ ຮູບແບບ ແລະ ເລື່ອງເລົ່າ ກ່ຽວກັບ ສະພາບອາກາດ

5 ລັກສະນະໃດຕໍ່ໄປນີ້ ທີ່ບໍ່ກ່ຽວຂ້ອງກັບສະພາບອາກາດ?

A ອຸນຫະພູມອາກາດ

B ຮູບແບບຂອງປະລິມານນ້ຳຝົນ

C ລົມພັດແຮງ

D ເສັ້ນແວງ

6	ສະພາບອາກາດແບບໃດ ທີ່ພົບເຫັນຫຼາຍທີ່ສຸດ ຢູ່ຂົງເຂດອາຊີຕາເວັນອອກສ່ຽງໃຕ້ (ໂດຍອີງໃສ່ການແບ່ງເຂດພູມອາກາດ ແບບ ຄັບເພັນ (Köppen)?
A	ພູມອາກາດເຂດຮ້ອນ ແລະ ແຫ້ງແລ້ງ
B	ພູມອາກາດແບບອົບອຸ່ນ ແລະ ແຫ້ງແລ້ງ
C	ພູມອາກາດ ແບບພາກພື້ນທະວີບ
D	ພູມອາກາດເຂດຮ້ອນ ແລະ ອົບອຸ່ນ

7 ໂດຍທົ່ວໄປແລ້ວ ສະພາບອາກາດ ຈະມີຄວາມປຽກຊຸ່ມ ຢູ່:

A ໄທ

B ມົງໂກລີ

C ອາຟຣິກາເໜືອ

D ເກຣັກ

8	**ເຂດພູມອາກາດໃດ ມີລັກສະນະພິເສດເຊັ່ນ ບໍ່ມີລະດູແລ້ງ ແລະ ມີປະລິມານນ້ຳຝົນຫຼາຍ ຊຶ່ງມີຝົນຕົກສະໝ່ຳສະເໝີຕະຫຼອດປີ?**
A	ພູມອາກາດເຂດປ່າດົງດິບໃກ້ເສັ້ນສູນສູດ (Equatorial rainforest)
B	ພູມອາກາດແບບມໍລະສຸມໃກ້ເສັ້ນສູນສູດ (Equatorial monsoon)
C	ພູມອາກາດແບບພາກພື້ນທະວີບທີ່ມີຄວາມປຽກຊຸ່ມ (humid continental)
D	ພູມອາກາດເຂດຮ້ອນຊຸ່ມ (humid sub-tropical)

9	**ສະພາບພູມອາກາດໃດຕໍ່ໄປນີ້ ຊີ້ບອກເຖິງ: 'ອຸນຫະພູມສະເລ່ຍ ຂອງເດືອນທີ່ຮ້ອນທີ່ສຸດ ແມ່ນສູງກ່ວາ 20 ອົງສາ (°C), ອຸນຫະພູມ ສະເລ່ຍ ຂອງເດືອນທີ່ໜາວທີ່ສຸດ ແມ່ນຕ່ຳກ່ວາ 18 ອົງສາ (°C), ແລະ ບໍ່ມີລະດູແລ້ງ'?**
A	ພູມອາກາດແບບມໍລະສຸມໃກ້ເສັ້ນສູນສູດ (Equatorial monsoon)
B	ພູມອາກາດເຂດຮ້ອນຊຸ່ມ (humid sub-tropical)
C	ພູມອາກາດເຂດປ່າດົງດິບໃກ້ເສັ້ນສູນສູດ (Equatorial rainforest)
D	ພູມອາກາດແບບພາກພື້ນທະວີບທີ່ມີຄວາມປຽກຊຸ່ມ (humid continental)

10	ປະເທດໃດເຫຼົ່ານີ້ ທີ່ບໍ່ມີສະພາບອາກາດແບບເຂດພູດອຍ?
A	ຫວຽດນາມ
B	ລາວ
C	ຈີນ
D	ສິງກະໂປ

11 ສະຖານທີ່ໃດໜາວທີ່ສຸດໃນໂລກ?

A ມົງໂກລີ

B ມະຫາສະໝຸດອາກຕິກ

C ສະວີເດັນ

D ທະວີບແອນຕາກຕິກກາ

12 ສະຖິຕິອຸນຫະພູມສູງສຸດ ທີ່ເຄີຍເກັບກຳໄດ້ (56.7°C) ຢູ່ໂລກ ແມ່ນເກີດຂຶ້ນຢູ່ໃສ?

A ທະເລຊາຍນາມິບ (Namib)

B ທະເລທີ່ບໍ່ມີຊີວິດ (Dead Sea)

C ພູເຂົາມໍລະນະ (Death Valley)

D ທະເລຊາຍຊາຮາຣາ (Sahara)

13 ພາວະໂລກຮ້ອນ ເກີດຂຶ້ນໄວວາທີ່ສຸດ ຢູ່ໃສ?

A ພາກໃຕ້ຂອງທະວີບເອີຣົບ

B ເຂດຮ້ອນຊຸ່ມທີ່ຕັ້ງຢູ່ໃກ້ເສັ້ນສູນສູດ

C ມະຫາສະໝຸດອາກຕິກ

D ຊີກໂລກໃຕ້

14 ຊື່ວິທະຍາສາດ ທີ່ໃຊ້ໃນການຕິດຕາມ, ສຶກສາ ແລະ ພະຍາກອນອາກາດ ເອີ້ນວ່າແນວໃດ?

A	ວິຊາດ້ານສະພາບດິນຟ້າອາກາດ (Climatology)
B	ອຸທົກກະສາດ
C	ທໍລະນີສາດ ກ່ຽວກັບ ທາມນ້ຳແຂງ
D	ອຸຕຸນິຍົມ

15 ສາຂາ ພູມອາກາດວິທະຍາບູຮານ (paleoclimatology) ສຶກສາ ກ່ຽວກັບຫຍັງ?

A ການປ່ຽນແປງສະພາບດິນຟ້າອາກາດ ທີ່ເກີດຂຶ້ນປະຈຸບັນ ເນື່ອງມາຈາກກິດຈະກຳຂອງມະນຸດ

B ສະພາບດິນຟ້າອາກາດໃນອະດີດ

C ສະພາບດິນຟ້າອາກາດ ຢູ່ເຂດພູດອຍ

D ສະພາບດິນຟ້າອາກາດໃນອະນາຄົດ

16 ນັກວິທະຍາສາດໃຊ້ວິທີໃດ ເພື່ອຊອກຮູ້ ກ່ຽວກັບ ສະພາບດິນຟ້າອາກາດ ຢູ່ໝ່ວຍໂລກ ໃນຊ່ວງ 100,000 ປີ ກ່ອນ?

A ສຶກສາ ກ່ຽວກັບ ຮອບວົງທີ່ປະກົດເຫັນຢູ່ໜ້າຕັດຂອງລຳຕົ້ນໄມ້

B ສຶກສາ ກ່ຽວກັບ ຟອງອາກາດ ຢູ່ນ້ຳແຂງ ໃນມະຫາສະໝຸດອາກຕິກ

C ສຶກສາ ກ່ຽວກັບ ຮູບຖ່າຍຈາກດາວທຽມ

D ສຶກສາຂໍ້ມູນ ດ້ານອຸຕຸວິທະຍາ

17 ຍຸກນ້ຳແຂງຄັ້ງລ່າສຸດ ສິ້ນສຸດຊ່ວງປີໃດ?

A ປະມານ 100 ປີກ່ອນ

B ປະມານ 1,000 ປີກ່ອນ

C ປະມານ 10,000 ປີກ່ອນ

D ປະມານ 100,000 ປີກ່ອນ

18 ນັກວິທະຍາສາດ ຄາດວ່າ ຍຸກນ້ຳແຂງຄັ້ງຕໍ່ໄປ ຈະເກີດຂຶ້ນປະມານຊ່ວງໃດ?

A ບໍ່ເກີດຂຶ້ນ

B ປະມານ 1-3 ລ້ານປີ

C ປະມານ 10,000-30,000 ປີ

D ປະມານ 100,000-300,000 ປີ

19	ປັດໄຈໃດດັ່ງຕໍ່ໄປນີ້ ທີ່ສົ່ງຜົນສະທ້ອນຕໍ່ສະພາບດິນຟ້າອາກາດໃນໄລຍະສັ້ນເທົ່ານັ້ນ (ອີກບໍ່ພໍເທົ່າໃດປີ ຫຼື ຫຼາຍສະຕະວັດ)?
A	ການເຄື່ອນຕົວຂອງທະວີບ
B	ພູເຂົາໄຟລະເບີດ
C	ການປ່ຽນແປງໃນມຸມອຽງຢູ່ແກນໂລກ
D	ການປ່ອຍທາດອາຍເຮືອນແກ້ວຈາກຝີມືມະນຸດ

20 ການລະເບີດຂອງພູເຂົາໄຟ ສົ່ງຜົນສະທ້ອນຕໍ່ສະພາບດິນ ຟ້າອາກາດ ຄືແນວໃດ?

A ບໍ່ມີຜົນກະທົບ

B ເຮັດໃຫ້ອຸນຫະພູມເພີ່ມຂຶ້ນ

C ເຮັດໃຫ້ອຸນຫະພູມຫຼຸດລົງ

D ເຮັດໃຫ້ອຸນຫະພູມເພີ່ມຂຶ້ນໃນບາງຄັ້ງ ແລະ ຫຼຸດລົງໃນບາງຄັ້ງ

21 ຂໍ້ໃດຕໍ່ໄປນີ້ ແມ່ນທາດອາຍເຮືອນແກ້ວ?

A	ໄນໂຕຣເຈນ (N_2)
B	ກາກບອນໄດອ໋ອກໄຊ (CO_2)
C	ກາກບອນໂມໂນໄຊ (CO)
D	ອົກຊີເຈນ (O_2)

22 ທາດອາຍເຮືອນແກ້ວໃດເຫຼົ່ານີ້ ທີ່ກວມເອົາ 75% ຂອງປະລິມານການປ່ອຍທາດອາຍເຮືອນແກ້ວຈາກມະນຸດທັງໝົດ?

A ເມຕານ (CH_4)

B ກາກບອນໄດອ໋ອກໄຊ (CO_2)

C ຊຸນເຟີ ເຮັກຊາຟູອໍຣາຍ (SF_6)

D ໄນຕຣັດ ອ໋ອກໄຊ (N_2O)

ຖາມຕອບ ກ່ຽວກັບ ສະພາບດິນຟ້າອາກາດ

ຄຳຕອບ



ຄຳຕອບ

1. C	5. D	9. B	13. C	17. C	21. B
2. A	6. D	10. D	14. D	18. C	22. B
3. C	7. A	11. D	15. B	19. B	
4. A	8. A	12. C	16. B	20. C	